ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ອັດຕະປື

ເລກທີ 484 /ຈຂ ອປ

ອັດຕະປື, ວັນທີ 21 ເມສາ 2023

# ຂໍ້ຕົກລົງ

## ວ່າດ້ວຍ ການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ແຂວງອັດຕະປື

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນແຫ່ງ ສ ປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ການລ້ຽງສັດ ແລະການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ ,ລົງວັນທີ 11 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມຄະນະສະພາປະຊາຊົນແຂວງ, ສະບັບເລກທີ 67/ຄປຈຂ, ລົງວັນທີ 03 ກຸມພາ 2023 ວ່າດ້ວຍ ການຮັບຮອງເອົາແຜນການສ້າງຮ່າງນິຕິກຳໃຕ້ກົດໝາຍ ທີ່ສຳຄັນຂອງທ້ອງຖິ່ນ.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດກິດຈະການຟາມລ້ຽງສັດ, ລວມທັງມາດຕະຖານເຕັກນິກດ້ານຕ່າງໆ ຂອງຟາມລ້ຽງສັດຕາມແຕ່ລະຂະໜາດ ເພື່ອໃຫ້ດຳເນີນໄປຢ່າງຖືກຕ້ອງສອດຄ່ອງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ແນໃສ່ຕອບສະໜອງຜະລິດຕະພັນສັດທີ່ມີຄຸນນະພາບ, ສະອາດ ແລະ ມີຄວາມປອດໄພຕໍ່ຜູ້ບໍລິໂພກ ທັງຮັບປະກັນການປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

**ມາດຕາ 2 ການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ.**

ການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ແມ່ນການກຳນົດລະບຽບການ ແລະ ຂັ້ນຕອນການສ້າງຕັ້ງ ແລະ ດຳເນີນກິດຈະການຟາມລ້ຽງສັດ ລວມທັງຂອດການລ້ຽງສັດທີ່ດີ ຕາມເຕັກນິກວິຊາການເຊັ່ນ: ການຂໍອະນຸຍາດ, ການອອກໃບອະນຸຍາດ, ການກຳນົດມາດຕະຖານຟາມລ້ຽງສັດ, ເງື່ອນໄຂການດຳ ເນີນວຽກງານການລ້ຽງສັດ, ການປະຕິບັດພັນທະ, ສິດ ແລະ ໜ້າທີ່ ຂອງຜູ້ປະກອບກິດຈະການຟາມລ້ຽງສັດ, ລະບົບການຄຸ້ມຄອງ ແລະ ກວດກາ ລວມທັງການກຳນົດລະບົບການຄຸ້ມຄອງ ແລະ ກວດກາ ຂອງອົງການຄຸ້ມຄອງຂັ້ນທ້ອງຖິ່ນ.

**ມາດຕາ 3 ການອະທິບາຍຄຳສັບ.**

ຄຳສັບທີ່ນຳມາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຟາມລ້ຽງສັດ ໝາຍເຖິງ ສະຖານທີ່ທີ່ລັດອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສ້າງຂຶ້ນ ເພື່ອດຳເນີນການລ້ຽງສັດ ແລະ ຂະຫຍາຍພັນສັດ ເປັນຈຳນວນຫຼາຍໃນການຜະລິດເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ, ດ້ວຍຮູບການການລົງທຶນ ແລະ ການລ້ຽງສະສົມ ທີ່ມີການຄຸ້ມຄອງ ແລະ ການນຳໃຊ້ເຕັກນິກວິທະຍາສາດເຂົ້າຊ່ວຍ ຊຶ່ງລວມມີຟາມລ້ຽງຄວາຍ-ງົວ, ຟາມລ້ຽງໝູ, ຟາມລ້ຽງແບ້, ຟາມລ້ຽງສັດປີກພັນຊີ້ນ-ພັນໄຂ່, ຟາມລ້ຽງພໍ່ແມ່ພັນສັດ, ຟາມຜະລິດແນວພັນ ແລະ ຟາມປັບປຸງພັນສັດ;

2. ສັດຕະວະແພດ ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບປະກາສະນີຍະບັດ ຫຼື ຜ່ານການຝຶກອົບຮົມວິຊາສະເພາະດ້ານສັດຕະວະແພດ;

3. ວິຊາການລ້ຽງສັດປະຈຳຟາມ ໝາຍເຖິງ ພະນັກງານໃນຟາມ ຫຼື ພະນັກງານຂອງລັດ ທີ່ເຮັດວຽກງານກ່ຽວກັບການລ້ຽງສັດ ທີ່ມີວິຊາສະເພາະດ້ານການລ້ຽງສັດ;

4. ທີ່ປຶກສາດ້ານການລ້ຽງສັດ-ການສັດຕະວະແພດ ໝາຍເຖິງ ຊ່ຽວຊານດ້ານການລ້ຽງສັດ-ສັດຕະ ວະແພດ ທີ່ເຮັດວຽກບາງເວລາ ຕາມຂໍ້ຜູກພັນສັນຍາກັບຜູ້ປະກອບການຟາມລ້ຽງສັດ;

5. ຜູ້ປະກອບການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ແລະ ດຳເນີນກິດຈະການຟາມລ້ຽງສັດ;

6. ການຈົດທະບຽນພິມສັດ ໝາຍເຖິງ ການສ້າງເອກະສານບັນທຶກ ແລະ ໝາຍນໍ້າເບີປະຈຳໂຕສັດ ຫຼື ສ້າງບັນຊີລະຫັດຈຳແນກກຸ່ມ ຫຼື ຝູງສັດໃດໜຶ່ງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ.**

ລັດ ຖືເອົາວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ເປັນວຽກງານສຳຄັນ ຂອງການພັດທະນາກະສິກຳ ແລະ ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ດຳເນີນການລ້ຽງສັດ ເພື່ອປະກອບສ່ວນເຂົ້າໃນການ ຄໍ້າປະກັນຄວາມ ໝັ້ນຄົງທາງດ້ານສະບຽງອາຫານ ແລະ ການຜະລິດເປັນສິນຄ້າ.

ລັດ ເພີ່ມທະວີການລົງທຶນ ໃສ່ການພັດທະນາພື້ນຖານວັດຖຸເຕັກນິກ ແລະ ບຸກຄະລາກອນສຳລັບຄົ້ນຄວ້າວິໄຈ ແລະ ຖ່າຍທອດເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ກ່ຽວກັບການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ບໍ່ສ້າງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດ ລ້ອມ.

ລັດ ສົ່ງເສີມ ແລະ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດລວມທັງການປຸງແຕ່ງຂັ້ນຕົ້ນ ເພື່ອເພີ່ມຜົນຜະລິດຈາກສັດ, ຮັບປະກັນຄຸນນະພາບ, ຄວາມປອດໄພຂອງຜູ້ບໍລິໂພກ ແລະ ກາຍເປັນສິນຄ້າ ໂດຍການເຂົ້າເຖິງນະໂຍບາຍຕ່າງໆ ເປັນຕົ້ນແມ່ນນະໂຍບາຍດ້ານສິນເຊື່ອ ທີ່ມີດອກເບ້ຍ ແລະ ໄລຍະກູ້ຢືມສົມເຫດສົມຜົນ ລວມທັງນະໂຍບາຍຫຼຸດຜ່ອນພາສີ, ອາກອນ, ການຊົດເຊີຍ ແລະ ຄວບຄຸມພະຍາດ ສະເພາະໃດໜຶ່ງຕາມການກຳນົດ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ.**

ວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ;
2. ຮັບປະກັນຄວາມປອດໄພຕໍ່ຊີວິດຂອງ ຄົນ ແລະ ສັດ;

3. ຫັນເອົາການລ້ຽງສັດແບບທຳມະຊາດ ໄປສູ່ການລ້ຽງສັດແບບເຄິ່ງທັນສະໄໝ ຫຼື ທັນສະໄໝ;

4. ສອດຄ່ອງກັບສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບກິດຈະການຟາມລ້ຽງສັດ ຢູ່ພາຍໃນ ແຂວງ ອັດຕະປື.

## ໝວດທີ 2
## ການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ

**ມາດຕາ 7 ການອະນຸຍາດສ້າງຕັ້ງຟາມລ້ຽງສັດ.**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງຟາມລ້ຽງສັດ ຕ້ອງໄດ້ຮັບການອະນຸຍາດຈາກ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຫຼື ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເອກະສານປະກອບການຂໍອະນຸຍາດມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດ ຕາມແບບຟອມທີ່ອົງການກ່ຽວຂ້ອງໄດ້ກຳນົດ;

2. ໃບປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

3. ບົດວິພາກເສດຖະກິດເຕັກນິກກ່ຽວກັບການດຳເນີນກິດຈະການຟາມລ້ຽງສັດ;

4. ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້;

5. ໃບທະບຽນວິສາຫະກິດ;

6. ໃບຢັ້ງຢືນການມອບອາກອນ;

7. ໃບຊີວະປະຫວັດ;

8. ໃບຢັ້ງຢືນທີ່ຢູ່;

9. ໃບຢັ້ງຢືນສຸຂະພາບ;

10. ໃບແຈ້ງໂທດ;

11. ໃບອະນຸຍາດນຳໃຊ້ທີ່ດິນ.

ເມື່ອໄດ້ຮັບຄຳຮ້ອງຈາກຜູ້ສະເໜີແລ້ວ ຕ້ອງດຳເນີນການຄົ້ນຄວ້າ ແລະ ອອກໃບອະນຸຍາດ ຫຼື ໃນກໍລະ ນີທີ່ບໍ່ມີເງື່ອນໄຂຄົບຖ້ວນ ບໍ່ສາມາດອອກໃບອະນຸຍາດໃຫ້ໄດ້ ກໍຕ້ອງແຈ້ງເງື່ອນໄຂໃຫ້ຜູ້ສະເໜີໄດ້ຮັບຮູ້ຢ່າງເປັນລາຍລັກອັກສອນພາຍໃນ 15 ວັນນັບແຕ່ວັນທີ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃບອະນຸຍາດສ້າງຕັ້ງຟາມລ້ຽງສັດ ຂະໜາດໃຫຍ່, ກາງ ແລະ ນ້ອຍ ມີອາຍຸນຳໃຊ້ໄດ້ 1 ປີ.

**ມາດຕາ 8 ການຕໍ່ໃບອະນຸຍາດສ້າງຕັ້ງຟາມລ້ຽງສັດ**

ກ່ອນໃບອະນຸຍາດສ້າງຕັ້ງຈະໝົດອາຍຸການນຳໃຊ້ ເຈົ້າຂອງຟາມ ຕ້ອງສະເໜີຂໍຕໍ່ໃບອະນຸຍາດນຳພະແນກ ກະສິກຳ ແລະ ປ່າໄມ້ແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກ່ອນໝົດອາຍຸ 30 ວັນ ໂດຍປະກອບເອກະສານດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດຕາມແບບຟອມທີ່ອົງການກ່ຽວຂ້ອງກຳນົດ;

2. ສຳເນົາໃບອະນຸຍາດສະບັບເດີມ;
3. ບົດລາຍງານການຈັດຕັ້ງປະຕິ ບັດການດຳເນີນກິດຈະການຟາມ;
4. ສຳເນົາໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 9 ການປະຕິບັດຕໍ່ໃບອະນຸຍາດ.**

ເມື່ອໄດ້ຮັບການຜູ້ສະເໜີແລ້ວ ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ທີ່ກ່ຽວຂ້ອງ ຕ້ອງໄດ້ລົງກວດກາການຈັດຕັ້ງປະຕິບັດຕົວຈິງ ແລ້ວລາຍງານເປັນລາຍລັກອັກສອນໃຫ້ພະແນກ ຫຼື ຫ້ອງການຮັບຊາບ ກ່ອນການຕໍ່ໃບອະນຸຍາດ ແລະ ຕ້ອງບໍ່ໃຫ້ກາຍ 10 ວັນລັດຖະການ ຫຼັງຈາກໄດ້ຮັບການສະເໜີ.

ໃນກໍລະນີເງື່ອນໄຂບໍ່ທັນຄົບຖ້ວນຕາມລະບຽບການ, ອັນເປັນສາຍເຫດບໍ່ສາມາດຕໍ່ໃບອະນຸຍາດໄດ້, ຕ້ອງແຈ້ງເຫດຜົນໃຫ້ຜູ້ສະເໜີຮັບຊາບພາຍໃນ 5 ວັນລັດຖະການນັບແຕ່ວັນທີທີ່ໄດ້ຮັບການສະເໜີເປັນຕົ້ນໄປ ຫຼື ໃນກໍລະນີທີ່ມີເຫດຈຳເປັນບໍ່ສາມາດຕໍ່ໃບອະນຸຍາດໃຫ້ໄດ້ກໍ່ເຊັ່ນດຽວກັນ.

ໃບອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການຟາມລ້ຽງສັດຈະໝົດອາຍຸການໃຊ້ງານໂດຍອັດຕະໂນມັດຖ້າກາຍກຳນົດເວລາ 30 ວັນ ຫາກບໍ່ໄດ້ຮັບການຕໍ່ໃບອະນຸຍາດ.

**ມາດຕາ 10 ການປະຕິບັດໃນກໍລະນີໃບອະນຸຍາດເສຍຫາຍ.**

ໃນກໍລະນີທີ່ໃບອະນຸຍາດເສຍຫາຍ ຫຼື ຖືກທຳລາຍ ໃຫ້ຜູ້ປະກອບການແຈ້ງຕໍ່ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍຍື່ນໃບຄຳຮ້ອງຂໍຮັບໃບແທນໃບອະນຸຍາດຄືນ ໃໝ່ ໂດຍຕ້ອງປະກອບເອກະສານດັ່ງນີ້:

1. ໃບຄຳຮ້ອງ ຂໍຮັບໃບແທນໃບອະນຸຍາດຕາມແບບຟອມທີ່ອົງການກ່ຽວຂ້ອງກຳນົດ;
2. ໃບຊີວະປະຫວັດ;
3. ໃບຢັ້ງຢືນທີ່ຢູ່;
4. ບົດລາຍງານການຈັດຕັ້ງປະຕິບັດການດຳເນີນກິດຈະການຟາມ.

**ມາດຕາ 11 ການໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດສ້າງຕັ້ງຟາມລ້ຽງສັດ.**

ເມື່ອພົບເຫັນວ່າ ຟາມດັ່ງກ່າວມີການລະເມີດມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຫຼື ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ມີສິດສັ່ງໂຈະການດຳເນີນກິດຈະການຟາມລ້ຽງສັດຊົ່ວຄາວ ພ້ອມທັງສ້າງບົດບັນທຶກກ່າວເຕືອນ ເພື່ອໃຫ້ຟາມດັ່ງກ່າວໄດ້ປັບປຸງ ແລະ ແກ້ໄຂໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກຕາມການແນະນຳ ຂອງພາກສ່ວນທີ່ກ່ຽວຂ້ອງ.

ຖ້າຜູ້ປະກອບການບໍ່ຕິບັດ ຫຼື ບໍ່ສາມາດປັບປຸງແກ້ໄຂມາດຕະຖານເຕັກນິກ ຕາມການແນະນຳຂອງພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດສົ່ງຜົນກະທົບຮ້າຍແຮງ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມີສິດສັ່ງຍົກເລີກ ແລະ ຖອນໃບອະນຸຍາດດຳເນີນກິດຈະການຟາມ ລ້ຽງສັດ.

## ໝວດທີ 3
## ມາດຕະຖານຟາມລ້ຽງສັດ

**ມາດຕາ 12 ການກຳນົດມາດຕະຖານຂອງຟາມລ້ຽງສັດ**

ການກຳນົດມາດຕະຖານຟາມລ້ຽງສັດປະກອບດ້ວຍ: ມາດຕະຖານລວມ ແລະ ມາດຕະຖານສະເພາະ.

1) ມາດຕະຖານລວມ ແມ່ນມາດຖານເຕັກນິກກ່ຽວກັບສ້າງຕັ້ງ ແລະ ດຳເນີນກິດຈະການຟາມ ເຊັ່ນ: ອົງປະກອບຂອງຟາມລ້ຽງສັດ ການຈັດຕັ້ງກ່ຽວກັບຟາມ, ອາຫານສັດ, ນ້ຳໃຊ້, ບຸກຄະລາກອນ, ສຸຂະພາບສັດ, ສິ່ງແວດລ້ອມ ແລະ ມາດຕະຖານສຸກເສີນອື່ນໆ.

2) ມາດຕະຖານສະເພາະ ແມ່ນມາດຕະຖານຟາມລ້ຽງສັດ ຕາມຊະນິດສັດ ຂະໜາດ ແລະ ຈຸດປະສົງ ສະ ເພາະຂອງຟາມລ້ຽງສັດ ເປັນຕົ້ນແມ່ນ: ມາດຕະຖານການລ້ຽງງົວນົມ, ມາດຕະຖານການລ້ຽງງົວຊີ້ນ, ມາດຕະຖານການລ້ຽງໝູພໍ່ແມ່ພັນ, ມາດຕະຖານການລ້ຽງໝູຊີ້ນ, ມາດຕະຖານການລ້ຽງແບ້, ມາດຕະຖານການລ້ຽງໄກ່ແມ່ໄຂ່, ຟາມລ້ຽງໄກ່ໄຂ່, ມາດຖານການລ້ຽງເປັດໄຂ່, ເປັດຊີ້ນ, ມາດຕະຖານການລ້ຽງນົກກະທາ ແລະ ອື່ນໆ.

**ມາດຕາ 13 ອົງປະກອບຂອງຟາມລ້ຽງສັດ.**

ຟາມລ້ຽງສັດ ຕ້ອງມີອົງປະກອບພື້ນຖານເຊັ່ນ: ສະຖານທີ່ຕັ້ງ, ລັກສະນະ, ລັກສະນະຂອງໂຮງເຮືອນ ແລະ ລັກສະນະ ຂອງຄອກລ້ຽງ ຫຼື ກົງລ້ຽງສັດ ດັ່ງລຸ່ມນີ້:

1. ສະຖານທີ່ຕັ້ງ ຂອງຟາມ:

- ຫ່າງຈາກໂຮງຂ້າສັດ ຫຼື ຕະຫລາດສັດ ຂອງຊຸມຊົນຢ່າງໜ້ອຍ 5 ກິໂລແມັດ;
- ສາມາດກັນ ແລະ ຄວບຄຸມການແຜ່ລະບາດ ຂອງເຊື້ອພະຍາດຈາກພາຍນອກເຂົ້າສູ່ໃນຟາມ;
- ເປັນບໍລິເວນທີ່ປອດໂປ່ງ ສາມາດຖ່າຍເທອາກາດໄດ້ດີ;
- ມີແຫຼ່ງນ້ຳທີ່ສະອາດ ແລະ ພຽງພໍຕະຫຼອດປີ;
- ເປັນບໍລິເວນທີ່ບໍ່ມີນ້ຳຖ້ວມຂັງ;
- ຫ່າງໄກຈາກຊຸມຊົນ ແລະ ໄດ້ຮັບການເຫັນດີຈາກອຳນາດການປົກຄອງທ້ອງຖິ່ນ ແລະ ອົງ ການທີ່ກ່ຽວຂ້ອງອື່ນເຫັນດີ;
- ຢູ່ໃນບ່ອນທີ່ມີການຄົມມະນາຄົມ ຫຼື ມີລະບົບໄຟຟ້າເຂົ້າເຖິງ.

2. ພື້ນທີ່ ຂອງຟາມ:

- ຕ້ອງມີເນື້ອທີ່ເໝາະສົມ ກັບຈຳນວນສັດລ້ຽງໃນຟາມ ທີ່ຈະບໍ່ກໍ່ໃຫ້ເກີດມີບັນຫາດ້ານສິ່ງແວດລ້ອມ ແລະ ດ້ານສຸຂະພາບສັດ;
- ຕ້ອງມີຮົ້ວອ້ອມ ທີ່ສາມາດປ້ອງສັດພາຍນອກ ເຂົ້າມາພົວພັນກັບສັດລ້ຽງໃນຟາມໄດ້;
- ຕ້ອງມີພື້ນທີ່ພຽງພໍ ສຳລັບຈັດແບ່ງການກໍ່ສ້າງຄອກລ້ຽງສັດ, ຄອກສັກຢາສັດ, ເຮືອນພັກພະ ນັກງານ ແລະ ການປູກຫຍ້າອາຫານສັດ.

3. ລັກສະນະຄອກລ້ຽງສັດ:

- ຄອກລ້ຽງສັດສ້າງດ້ວຍວັດຖຸແໜ້ນແກ່ນ, ສາມາດອະນາໄມ, ທຳຄວາມສະອາດ ຫຼື ຂ້າເຊື້ອໄດ້ງ່າຍ ແລະ ມີຂະໜາດເໝະສົມກັບຈຳນວນສັດລ້ຽງໃນຟາມ;
- ສ້າງໃຫ້ຖືກຕ້ອງຕາມກຳນົດໝາຍເຕັກນິກທີ່ກຳນົດໄວ ແລະ ນັບປະກັນໃຫ້ສັດຢູ່ສະບາຍ, ບໍ່ມີຜົນກະທົບຕໍ່ສຸຂະພາບ ຫຼື ເຮັດໃຫ້ສັດໄດ້ຮັບບາດເຈັບ.

**ມາດຕາ 14 ຂະໜາດ ຂອງຟາມລ້ຽງສັດທີ່ຂັ້ນທ້ອງຖິ່ນຄຸ້ມຄອງ.**

ຂະໜາດຂອງຟາມລ້ຽງສັດທີ່ຂັ້ນທ້ອງຖິ່ນຄຸ້ມຄອງ ມີດັ່ງນີ້:

1. ຟາມລ້ຽງສັດຂະໜາດນ້ອຍ;
2. ຟາມລ້ຽງສັດຂະໜາດກາງ;
3. ຟາມລ້ຽງຂະໜາດໃຫຍ່ທີ່ເປັນການລົງທຶນພາຍໃນແຂວງ.

**ມາດຕາ 15 ຟາມລ້ຽງສັດຂະໜາດນ້ອຍ.**

ຟາມລ້ຽງສັດຂະໜາດນ້ອຍ ແມ່ນຟາມລ້ຽງສັດປະເພດຕ່າງໆ ທີ່ມີການລ້ຽງຕາມຊະນິດ ແລະ ຈຳນວນສັດທີ່ລ້ຽງຕໍ່ຟາມ ດັ່ງນີ້:

| | |
|---|---|
| - ຟາມລ້ຽງໄກ່ໄຂ່ ທີ່ມີແມ່ໄກ່ | ແຕ່ 1.000 ຫາ 2.000 ໂຕ; |
| - ຟາມລ້ຽງໄກ່ຊີ້ນ ທີ່ມີໄກ່ | ແຕ່ 1.000 ຫາ 2.000 ໂຕ/ຊຸດ; |
| - ຟາມລ້ຽງເປັດໄຂ່ ທີ່ມີແມ່ເປັດ | ແຕ່ 300 ຫາ 1.000 ໂຕ; |
| - ຟາມລ້ຽງເປັດຊີ້ນ ທີ່ມີເປັດ | ແຕ່ 500 ຫາ 1.000 ໂຕ/ຊຸດ; |
| - ຟາມລ້ຽງນົກກະທາໄຂ່ ທີ່ມີແມ່ນົກ | ແຕ່ 3.000 ຫາ 6.000 ໂຕ; |
| - ຟາມລ້ຽງນົກກະທາຊີ້ນ ທີ່ມີນົກ | ແຕ່ 1.500 ຫາ 3.000 ໂຕ/ຊຸດ; |
| - ຟາມຜະລິດລູກໝູ ທີ່ມີແມ່ພັນໝູ | ແຕ່ 20 ເຖິງ 30 ແມ່; |
| - ຟາມລ້ຽງໝູຊີ້ນ ທີ່ມີໝູ | ແຕ່ 50 ຫາ 100 ໂຕ/ຊຸດ ຫຼື ໜ້ອຍກວ່າ 400 ໂຕ/ປີ; |
| - ຟາມຜະລິດລູກແກະ-ແບ້ ທີ່ມີແມ່ພັນ | ແຕ່ 20 ຫາ 40 ໂຕ; |
| - ຟາມລ້ຽງຄວາຍ-ງົວຊີ້ນ ທີ່ມີງົວ | ແຕ່ 30 ຫາ 60 ໂຕ/ຊຸດ; |
| - ຟາມລ້ຽງຄວາຍ-ງົວທົ່ວໄປທີ່ມີແມ່ພັນ | ແຕ່ 10 ຫາ 30 ໂຕ; |
| - ຟາມລ້ຽງງົວນົມ | ແຕ່ 10 ຫາ 20 ແມ່/ປີ. |

**ມາດຕາ 16 ຟາມລ້ຽງສັດຂະໜາດກາງ.**

ຟາມລ້ຽງສັດຂະໜາດກາງແມ່ນຟາມລ້ຽງສັດປະເພດຕ່າງໆ ທີ່ມີການລ້ຽງຕາມຊະນິດ ແລະ ຈຳນວນສັດທີ່ລ້ຽງຕໍ່ຟາມ ດັ່ງນີ້:

| | |
|---|---|
| - ຟາມລ້ຽງໄກ່ໄຂ່ ທີ່ມີແມ່ໄກ່ | ແຕ່ 2.001 ຫາ 10.000 ໂຕ; |
| - ຟາມລ້ຽງໄກ່ຊີ້ນ ທີ່ມີໄກ່ | ແຕ່ 2.001 ຫາ 5.000 ໂຕ/ຊຸດ; |
| - ຟາມລ້ຽງເປັດໄຂ່ ທີ່ມີແມ່ເປັດ | ແຕ່ 1.001 ຫາ 5.000 ໂຕ; |
| - ຟາມລ້ຽງເປັດຊີ້ນ ທີ່ມີເປັດ | ແຕ່ 1.000 ຫາ 3.000 ໂຕ/ຊຸດ; |
| - ຟາມລ້ຽງນົກກະທາໄຂ່ ທີ່ມີແມ່ນົກ | ແຕ່ 6.001 ຫາ 15.000 ໂຕ; |
| - ຟາມລ້ຽງນົກກະທາຊີ້ນ ທີ່ມີນົກ | ແຕ່ 3.001 ຫາ 6.000 ໂຕ/ຊຸດ; |
| - ຟາມຜະລິດລູກໝູ ທີ່ມີແມ່ພັນໝູ | ແຕ່ 31 ເຖິງ 100 ແມ່; |
| - ຟາມລ້ຽງໝູຊີ້ນ ທີ່ມີໝູ | ແຕ່ 101 ຫາ 500 ໂຕ/ຊຸດ ຫຼື ໜ້ອຍກວ່າ 2.000 ໂຕ/ປີ; |
| - ຟາມຜະລິດລູກແກະ-ແບ້ ທີ່ມີແມ່ພັນ | ແຕ່ 41 ຫາ 100 ໂຕ; |
| - ຟາມລ້ຽງຄວາຍ-ງົວ ທີ່ມີຄວາຍ-ງົວ | ແຕ່ 61 ຫາ 100 ໂຕ/ຊຸດ; |
| - ຟາມລ້ຽງຄວາຍ-ງົວທົ່ວໄປ ທີ່ມີແມ່ພັນ | ແຕ່ 21 ຫາ 100 ໂຕ; |
| - ຟາມລ້ຽງງົວນົມ | ແຕ່ 21 ຫາ 100 ແມ່/ປີ. |

**ມາດຕາ 17 ຟາມລ້ຽງສັດຂະໜາດໃຫຍ່ທີ່ເປັນການລົງທຶນພາຍໃນແຂວງ.**

ຟາມລ້ຽງສັດຂະໜາດໃຫຍ່ທີ່ເປັນການລົງທຶນພາຍໃນແຂວງ ແມ່ນຟາມລ້ຽງສັດປະເພດຕ່າງໆ ທີ່ມີການລ້ຽງຕາມຊະນິດ ແລະ ຈຳນວນສັດທີ່ລ້ຽງຕໍ່ຟາມ ດັ່ງນີ້:

- ຟາມລ້ຽງໄກ່ພັນໄຂ່ ເພື່ອຜະລິດໄຂ່ທີ່ມີແມ່ໄກ່ ແຕ່ 10.001 ໂຕ ຂຶ້ນໄປ;
- ຟາມລ້ຽງໄກ່ພັນຊີ້ນ ເພື່ອຜະລິດໄກ່ຊີ້ນ ແຕ່ 5.001 ໂຕ/ຊຸດ ຂຶ້ນໄປ;
- ຟາມລ້ຽງເປັດພັນໄຂ່ ທີ່ມີແມ່ເປັດ ແຕ່ 5.001 ໂຕ ຂຶ້ນໄປ;
- ຟາມລ້ຽງເປັດພັນຊີ້ນ ທີ່ມີເປັດ ແຕ່ 3.001 ໂຕ/ຊຸດ ຂຶ້ນໄປ;
- ຟາມລ້ຽງນົກກະທາ ເພື່ອຜະລິດໄຂ່ທີ່ມີແມ່ນົກ ແຕ່ 15.001 ໂຕ ຂຶ້ນໄປ;
- ຟາມລ້ຽງນົກກະທາຊີ້ນ ທີ່ມີນົກ ແຕ່ 6.001 ໂຕ/ຊຸດ ຂຶ້ນໄປ;
- ຟາມຜະລິດລູກໝູ ທີ່ມີແມ່ພັນໝູ ແຕ່ 101 ແມ່ ຂຶ້ນໄປ;
- ຟາມລ້ຽງໝູຊີ້ນ ທີ່ມີໝູ ແຕ່ 501 ໂຕ/ຊຸດ ຂຶ້ນໄປ;
- ຟາມຜະລິດລູກແກະ-ແບ້ ທີ່ມີແມ່ພັນ ແຕ່ 101 ໂຕ;
- ຟາມລ້ຽງຄວາຍ-ງົວຊີ້ນ ທີ່ມີງົວ ແຕ່ 101 ໂຕ/ຊຸດ ຂຶ້ນໄປ;
- ຟາມລ້ຽງຄວາຍ-ງົວທົ່ວໄປທີ່ມີແມ່ພັນ ແຕ່ 101 ໂຕ ຂຶ້ນໄປ;
- ຟາມລ້ຽງງົວນົມ ແຕ່ 101 ແມ່ ຂຶ້ນໄປ.

**ມາດຕາ 18 ມາດຕະຖານດ້ານການຈັດການຟາມ**

ການຈັດການພາຍໃນຟາມ ແມ່ນການບໍລິຫານການຈັດການຟາມລ້ຽງສັດແມ່ນການຈັດການຢູ່ພາຍໃນໂຮງລ້ຽງສັດ ແລະ ອຸປະກອນການລ້ຽງສັດ, ການຄຸ້ມຄອງ ແລະ ຈັດການສັດທີ່ລ້ຽງໃນຟາມ (ສິ່ງເສດເຫຼືອ), ຍານພາຫານະ, ລະບົບການບັນທຶກຂໍ້ມູນ, ຄູ່ມືການລ້ຽງສັດ ເຊັ່ນ: ຕ້ອງມີການອະນາໄມ, ຂ້າເຊື້ອຄອກລ້ຽງສັດ ແລະ ອຸປະກອນການລ້ຽງສັດເປັນປະຈຳ.

ການຈັດການພາຍນອກຟາມ ແມ່ນກ່ອນນຳສັດຈາກພາຍນອກເຂົ້າມາລ້ຽງໃນຟາມຕ້ອງມີການກັກກັນສັດດັ່ງກ່າວ ເພື່ອຕິດຕາມອາການ ແລະ ສຸຂະພາບໃຫ້ແນ່ໃຈວ່າປອດໄພ, ຕ້ອງມີການອະເຊື້ອພາຫະນະຂົນສົ່ງສັດເຂົ້າ-ອອກຟາມ ທຸກໆຄັ້ງທີ່ມີການຂົນສົ່ງສັດ.

ການຈັດການດ້ານອາຫານສັດ ແມ່ນຕ້ອງຮັບປະກັນຄວາມສະອາດ, ພຽງພໍ ແລະ ມີຄຸນນະພາບ, ຖ້າປະ ສົມອາຫານເອງ ຕ້ອງມີຄຸນນະພາບຕາມມາດຕະຖານທີ່ກຳນົດໄວ້ ໃນປຶ້ມຄູ່ມືມາດຕະຖານຄຸນນະພາບອາຫານສັດ ແລະ ສູດອາຫານສັດ ເລກທີ 0380/ກປ, ລົງວັນທີ 14 ພຶດ ສະພາ 2001 ແລະ ຕ້ອງມີສາງເກັບແຍກໄວ້ຕ່າງຫາກ.

ມາດຕະຖານດ້ານບຸກຄະລາກອນ ແມ່ນຟາມລ້ຽງສັດຕ້ອງມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການກ່ຽວກັບການລ້ຽງສັດ, ການສັດຕະວະແພດເປັນຢ່າງດີ ແລະ ມີຈຳນວນພຽງພໍຕາມຕຳແໜ່ງງານຕ່າງໆ ທີ່ສາມາດດູແລສັດໄດ້ຢ່າງທົ່ວເຖິງ.

ບຸກຄະລາກອນທັງໝົດເຫຼົ່ານີ້ຕ້ອງໄດ້ຮັບການກວດກາສຸຂະພາບ ເປັນປະຈຳຕາມຄວາມຈຳເປັນ ແລະ ທຸກຄົນຕ້ອງປະຕິບັດຫຼັກການ ດັ່ງຕໍ່ໄປນີ້:

- ຕ້ອງເຄົາລົບກົດລະບຽບ ຂອງຟາມ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຢ່າງເຄັ່ງຄັດ ແລະ ປະຕິບັດແບບບໍ່ມີກໍລະນີຍົກເວັ້ນ;

- ຜູ້ລ້ຽງສັດຢູ່ໃນໂຮງລ້ຽງສັດ ຕ້ອງບໍ່ແມ່ນຄົນດຽວກັນກັບຜູ້ຈຳໜ່າຍສັດ ຫຼື ນຳເອົາສັດໄປຕະຫຼາດ, ໄປໂຮງຂ້າສັດ ຫຼື ຜູ້ຂົນສົ່ງສັດເຂົ້າ-ອອກຟາມ;

- ຜູ້ລ້ຽງສັດຕ້ອງບໍ່ລ້ຽງສັດເປັນການສ່ວນຕົວຢູ່ເຮືອນ ຂອງຕົນ ຫຼື ໄປກ່ຽວຂ້ອງກັບສັດທີ່ຢູ່ພາຍນອກຟາມ;

- ຕ້ອງໄດ້ຜ່ານການຝຶກອົບຮົມກ່ຽວກັບຄວາມປອດໄພທາງຊີວະພາບ.

ການຈັດການດ້ານສຸຂະພາບສັດ ແມ່ນຟາມລ້ຽງສັດ ຕ້ອງມີລະບົບເຝົ້າລະວັງ, ການປ້ອງກັນ ແລະ ຄວບຄຸມພະຍາດສັດຢ່າງມີປະສິດທິພາບ ໂດຍສະເພາະແມ່ນຟາມລ້ຽງສັດຂະໜາດໃຫຍ່ຕ້ອງມີສັດຕະວະແພດ ຫຼື ມີທີ່ປຶກສາດ້ານສຸຂະພາບສັດປະຈຳຟາມ ແລະ ຕ້ອງແຕ່ງຕັ້ງຜູ້ລ້ຽງສັດປະຈຳຢູ່ຟາມເປັນຜູ້ຊ່ວຍສັດຕະວະແພດ ເພື່ອຮັບຜິດຊອບຕິດຕາມສະພາບ ຂອງສັດລ້ຽງໃນແຕ່ລະວັນ ເພື່ອລາຍງານໃຫ້ແກ່ສັດຕະວະແພດປະຈຳຟາມຮັບຊາບສະພາບ ຂອງຟາມໃນແຕ່ລະວັນ, ມີລະບົບຄວບຄຸມການເຄື່ອນຍ້າຍສັດເຂົ້າ-ອອກຟາມ ແລະ ໃຫ້ທຸກຄົນປະຕິບັດຕາມກົດລະບຽບດັ່ງ ກ່າວຢ່າງເຂັ້ມງວດ.

### ມາດຕາ 19 ການຈັດການຟາມລ້ຽງສັດ.

ການຈັດການຟາມລ້ຽງສັດ ແມ່ນການບໍລິຫານຈັດການພາຍໃນໂຮງລ້ຽງສັດ, ອຸປະກອນ, ການຈັດການຢູ່ພາຍນອກໂຮງລ້ຽງສັດ ແລະ ການຈັດການລະບົບທັງໝົດ ທີ່ກ່ຽວຂ້ອງກັບການລ້ຽງສັດ ເຊັ່ນ:

1. ການຈັດການໂຮງລ້ຽງສັດ;
2. ການປະຕິບັດງານໃນໂຮງລ້ຽງສັດ;
3. ການປະຕິບັດເພື່ອກຽມຄວາມພ້ອມກ່ອນນຳເອົາສັດເຂົ້າມາລ້ຽງໃໝ່;
4. ການຈັດການຢູ່ບໍລິເວນອ້ອມຮອບໂຮງລ້ຽງສັດ;
5. ການຄຸ້ມຄອງສັດລ້ຽງພາບໃນຟາມ;
6. ການຈັດການກ່ຽວກັບພາຫະນະ;
7. ການສ້າງລະບົບການບັນທຶກຂໍ້ມູນ;
8. ຄູ່ມືການຈັດການຟາມລ້ຽງສັດ.

### ມາດຕາ 20 ການຈັດການດ້ານອາຫານສັດ.

ການຈັດການອາຫານສັດ ຕ້ອງປະຕິບັດຕາມມາດຕະຖານ ດັ່ງນີ້:

1. ອາຫານສຳເລັດຮູບຕ້ອງຊື້ຈາກໂຮງງານ ຫຼື ຈາກຜູ້ປະກອບການຂາຍອາຫານສັດທີ່ໄດ້ຮັບອະນຸຍາດຕາມກົດໝາຍ ແລະ ມີຄຸນນະພາບຕາມແຕ່ລະ ສູດອາຫານສັດ; ຖ້າປະສົມອາຫານສັດໃຊ້ເອງ ຕ້ອງຊື້ອາຫານເຂັ້ມຂຸ້ນ, ວິຕາມິນ ແລະ ແຮ່ທາດຈາກໂຮງງານ ຫຼື ຜູ້ປະກອບການຂາຍອາຫານສັດ ທີ່ໄດ້ຮັບອະນຸຍາດຕາມກົດໝາຍ ແລະ ສູດອາຫານປະສົມນັ້ນຕ້ອງມີຄຸນນະພາບຕາມມາດຕະຖານທີ່ກຳນົດໄວ້ໃນ ປຶ້ມຄູ່ມືມາດຕະຖານຄຸນນະພາບອາຫານສັດ ແລະ ສູດອາຫານສັດສະບັບເລກທີ 0308/ກປ, ລົງວັນທີ 14 ພຶດສະພາ 2001 ວ່າດ້ວຍການຂົນ ສົ່ງອາຫານສັດຕ້ອງຂົນດ້ວຍພາຫານະທີ່ສະອາດ, ແຫ້ງ ແລະ ຂົນຕາມເສັ້ນທາງເວລາຂົນສົ່ງທີ່ກຳນົດ;

2. ຕ້ອງມີສາງເກັບອາຫານສັດ ແຍກໄວ້ຕ່າງຫາກ ແລະ ຫ້ອງເກັບອາຫານສັດ ຕ້ອງສາມາດຮັກສາຄຸນນະພາບເດີມຂອງອາຫານຕ້ອງສະອາດ ສາງ, ແຫ້ງ ແລະ ສາມາດປ້ອງກັນແມງໄມ້ ແລະ ສັດຖືເຊື້ອຕ່າງໆ ມີຖານຮອງພື້ນ ເພື່ອໃຫ້ອາກາດຖ່າຍເທໄດ້ສະດວກ ຖ້າຮັກສາວັດຖຸດິບທີ່ເປັນວິຕາມິນ ຖົງບັນຈຸອາຫານສັດຕ້ອງແຫ້ງ,

ສະອາດ, ກັນຄວາມຊຸ່ມໄດ້, ບໍ່ມີສານປົນເປື້ອນ ຫຼື ສານເຄືອບອື່ນໆ ແລະ ບໍ່ເຄີຍໃສ່ວັດຖຸມີພິດ, ປຸຍ ຫຼື ວັດຖຸທີ່ເປັນອັນຕະລາຍຕໍ່ສັດ, ບໍ່ມີສານຕົກຄ້າງຂອງວັດຖຸປົນເປື້ອນ ທີ່ເຮັດໃຫ້ອາຫານສັດເຊື່ອມຄຸນນະພາບ;

3. ຕ້ອງມີການກວດກາຄຸນນະພາບອາຫານສັດຢ່າງເປັນປົກກະຕິໂດຍການສຸ່ມເອົາຕົວຢ່າງອາຫານສັດສົ່ງຫ້ອງວິໄຈອາຫານສັດທີ່ເຊື່ອຖືໄດ້ ເພື່ອກວດກາ, ວິເຄາະຄຸນນະພາບ ແລະ ສານພິດຕົກຄ້າງ;

4. ຫຼີກລ່ຽງການນຳເອົາອາຫານສັດ ຈາກຟາມໜຶ່ງໄປລ້ຽງສັດອີກຟາມໜຶ່ງ ແຕ່ຖ້າຫາກຈຳເປັນກໍຕ້ອງມີການຮັບປະກັນຄວບຄຸມບໍ່ໃຫ້ເກີດຄວາມສ່ຽງການປົນເປື້ອນ ຈາກຟາມໜຶ່ງໄປອີກຟາມໜຶ່ງ;

5. ອາຫານທີ່ໃຊ້ລ້ຽງສັດຕ້ອງມີຄຸນນະພາບ ແລະ ໃຫ້ສັດກິນແຕ່ລະລຸ້ນອາຍຸຢ່າງເໝາະສົມ;

6. ຫຼີກເວັ້ນການນຳໃຊ້ຢາຕ້ານເຊື້ອ ປະສົມໃສ່ອາຫານສັດ ເພື່ອຈຸດປະສົງໃຫ້ເປັນສານກະຕຸ້ນ ການຈະເລີນເຕີບໂຕຂອງສັດທີ່ບໍ່ໄດ້ມີການປະເມີນຄວາມສ່ຽງດ້ານຄວາມປອດໄພຕໍ່ສຸຂະພາບຂອງສັດ ຫຼື ຕໍ່ຜູ້ບໍລິໂພກ ຫຼື ບໍ່ທັນໄດ້ມີການຢັ້ງຢືນ ຫຼື ແນະນຳໃຫ້ນຳໃຊ້ຢານັ້ນປະສົມລົງໃນອາຫານສັດມາກ່ອນ;

7. ຕ້ອງບໍ່ເອົາສິ້ນສ່ວນຈາກສັດຄ້ຽວເອື້ອງນຳໄປເປັນສ່ວນປະສົມຂອງອາຫານສັດຄ້ຽວເອື້ອງ;

8. ໃນການລ້ຽງສັດຄ້ຽວເອື້ອງ ໃນທົ່ງຫຍ້າຕ້ອງມີການຈັດການໃນການນຳໃຊ້ທົ່ງຫຍ້າ ຢ່າງຖືກວິທີ ໂດຍຕ້ອງແບ່ງເປັນຕອນເພື່ອໃຫ້ສັດໄດ້ກິນແບບໝູນວຽນ ຊຶ່ງແນໃສ່ນຳໃຊ້ທົ່ງຫຍ້າຢ່າງມີປະສິດທິຜົນ ແລະ ຫຼຸດຜ່ອນວົງຈອນຂອງພະຍາດກາຝາກ;

9. ຫຼີກເວັ້ນການນຳເອົາສັດໄປລ້ຽງໃສ່ທົ່ງຫຍ້າ ທີ່ຕິດກັບບ່ອນຖິ້ມຂີ້ເຫຍື້ອ ຫຼື ແຫຼ່ງກໍ່ສ້າງທີ່ຈະສ້າງໂອກາດໃຫ້ສັດກິນອາຫານທີ່ປົນເອົາວັດຖຸ ຫລື ໂລຫະເຂົ້າໄປໃນຮ່າງກາຍ ຊຶ່ງຈະກໍ່ໃຫ້ສັດເປັນອັນຕະລາຍໄດ້;

10. ຄວບລະວັງການປົນເປື້ອນຂອງສານເຄມີໃນອາຫານສັດຊຶ່ງຕ້ອງຫຼີກເວັ້ນບັນຫາການປົນເປື້ອນຂອງຢາຂ້າຫຍ້າ, ຢາຂ້າແມງໄມ້ ແລະ ທາດເຄມີເພີ່ມທີ່ຜູ້ຜະລິດ ຫຼື ປຸງແຕ່ງອາຫານປະສົມໃສ່ອາຫານສັດ; ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວນີ້, ຜູ້ລ້ຽງສັດ ຕ້ອງການເອົາໃຈໃສ່ເປັນພິເສດໃນການນຳໃຊ້ສານເຫຼົ່ານັ້ນ ຢູ່ໃນຂະບວນການລ້ຽງສັດຂອງຕົນ ໂດຍຕ້ອງປະຕິບັດຕາມວິທີການນຳໃຊ້ທີ່ຜູ້ຜະລິດແນະນຳຢ່າງເຄັ່ງຄັດ ໂດຍຕ້ອງຈົດບັນທຶກວັນ ເດືອນ ປີ, ປະລິມານ, ສະຖານທີ່ນຳໃຊ້ ລວມທັງການກຳນົດເວລາສານຕົກຄ້າງ ແລະ ວິທີການເກັບຮັກສາຢ່າງເຄັ່ງຄັດ;

11. ຕ້ອງມີການກວດກາ, ອະນາໄມ ແລະ ຂ້າເຊື້ອເຄື່ອງມືທີ່ໃຊ້ໃນການໃຫ້ອາຫານ ແລະ ນ້ຳດື່ມດ້ວຍຢາຂ້າເຊື້ອທີ່ເໝາະສົມຢ່າງເປັນປະຈຳເພື່ອປ້ອງກັນ ຫຼື ຫຼຸດຜ່ອນການເກີດເຊື້ອພະຍາດ ແລະ ເຫັດລາ ຫຼື ເກີດບັນຫາການເປັນພິດຕ່າງໆ.

**ມາດຕາ 21 ການຈັດການດ້ານສຸຂະພາບສັດ.**

ການຈັດການດ້ານສຸຂະພາບສັດ ແມ່ນການນຳໃຊ້ມາດຕະການຕ່າງໆ ດ້ານສັດຕະວະແພດເຊັ່ນ :ການປ້ອງກັນ, ຄວບຄຸມພະຍາດ, ການປິ່ນປົວພະຍາດສັດ ແລະ ການຄວບຄຸມສັດທີ່ເປັນພາຫະນຳເຊື້ອພະຍາດບໍ່ໃຫ້ເຂົ້າມາສຳພັດກັບສັດໃນຟາມໂດຍມີການຈັດການ ດັ່ງນີ້:

1. ການກັນ, ຄວບຄຸມພະຍາດສັດຢູ່ໃນຟາມ;
2. ການປິ່ນປົວພະຍາດສັດ;
3. ການຄວບຄຸມສັດທີ່ເປັນພາຫະນຳເຊື້ອພະຍາດບໍ່ໃຫ້ເຂົ້າມາສຳພັດກັບສັດໃນຟາມ;
4. ການຈັດການດ້ານສິ່ງແວດລ້ອມພາຍໃນຟາມ;
5. ມາດຕະການສຸກເສີນ.

# ໝວດທີ 4
# ສິດ ແລະ ພັນທະຂອງຜູ້ປະກອບການ

**ມາດຕາ 22 ສິດຂອງຜູ້ປະກອບການຟາມລ້ຽງສັດ.**

ຜູ້ປະກອບການຟາມລ້ຽງສັດ ມີສິດພື້ນຖານ ດັ່ງນີ້:

1. ຄຸ້ມຄອງ, ນຳໃຊ້, ຈຳໜ່າຍ, ສືບທອດສັດລ້ຽງຟາມຂອງຕົນຕາມກົດໝາຍ ແລະ ລະບຽບການ,
2. ໄດ້ຮັບການປົກປ້ອງການຜະລິດດ້ວຍຮູບການຊົດເຊີຍ ແລະ ຮູບການອື່ນໃນກໍລະນີມີການຂ້າທຳລາຍຕາມກົດໝາຍ ແລະ ລະບຽບການ;
3. ໄດ້ຮັບການຊ່ວຍເຫຼືອ ຫຼື ການແນະນຳທາງດ້ານວິຊາການ ແລະ ເຕັກໂນໂລຊີໃໝ່ກ່ຽວກັບການດຳເນີນການຜະລິດສັດ;
4. ໄດ້ຮັບຄວາມສະດວກ, ຍົກເວັ້ນພາສີ ຫຼື ຫຼຸດຜ່ອນອາກອນ ໃນການນຳເຂົ້າພໍ່ແມ່ພັນສັດ, ແນວພັນສັດ, ອາຫານສັດ, ອຸປະກອນຮັບໃຊ້ການລ້ຽງສັດ ແລະ ເຄື່ອງມືສັດຕະວະແພດທີ່ຈຳເປັນໃນການດຳເນີນການຜະລິດທຸລະກິດຂອງຕົນ, ການສົ່ງອອກສັດລ້ຽງທີ່ຜະລິດໄດ້ ລວມທັງຜະລິດຕະພັນສັດຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
5. ຄັດເລືອກເອົາພໍ່ແມ່ພັນສັດ, ນ້ຳເຊື້ອສັດ ຫຼື ແຊ່ເປັນ ເພື່ອສະເໜີຂຶ້ນທະບຽນຈາກພາກສ່ວນທີ່ກ່ຽວຂ້ອງ;
6. ໄດ້ຮັບການສົ່ງເສີມຈາກພາກສ່ວນທີ່ກ່ຽວຂ້ອງ, ຊຸກຍູ້ທາງດ້ານສິນເຊື່ອທະນາຄານ, ການຕະຫຼາດລວມທັງດ້ານລາຄາຢ່າງຍຸຕິທຳ;
7. ເຂົ້າຮ່ວມສະມາຄົມລ້ຽງສັດ ຕາມພາລະບົດບາດທີ່ສະມາຄົມໄດ້ກຳນົດໄວ້.

**ມາດຕາ 23 ພັນທະຂອງຜູ້ປະກອບການຟາມລ້ຽງສັດ**

ຜູ້ປະກອບການຟາມລ້ຽງສັດ ມີພັນທະຕົ້ນຕໍ ດັ່ງນີ້:

1. ດຳເນີນການຜະລິດຕາມການອະນຸຍາດ, ທີ່ລະບຸໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ແລະ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ບໍ່ໃຫ້ການດຳເນີນທຸລະກິດຂອງຕົນ ສ້າງຜົນກະທົບທາງລົບຕໍ່ຊີວິດ, ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
3. ກັກຂັງສັດທີ່ເຂົ້າມາໃໝ່ໄວ້ໃນສະຖານທີ່ຕ່າງຫາກຢ່າງໜ້ອຍ 10ວັນ ເພື່ອຕິດຕາມ ແລະ ກວດກາດ້ານສຸຂະພາບ ແລະ ຄວບຄຸມພະຍາດ ກ່ອນນຳເຂົ້າໄປລ້ຽງໃນຟາມ;
4. ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງ ໃນການປະຕິບັດວຽກງານຂອງລັດ;
5. ແຈ້ງຕໍ່ພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນກໍລະນີສົງໃສ ຫຼື ເກີດການລະບາດຂອງພະຍາດສັດທີ່ຈຳເປັນຕ້ອງແຈ້ງ ແລະ ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ໃນການນຳໃຊ້ມາດຕະການຄວບຄຸມການລະບາດຂອງພະຍາດສັດ;
6. ລາຍງານການສະໜອງຂໍ້ມູນກ່ຽວກັບການເຄື່ອນໄຫວຂອງກິດຈະການລວມທັງແຈ້ງ ເຫດຜົນກ່ຽວກັບການຢຸດເຊົາກິດຈະການຊົ່ວຄາວ ຫຼື ຖາວອນຂອງຕົນ;

7. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການອື່ນໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

8. ພົວພັນກັບອົງການປົກຄອງທ້ອງຖິ່ນ ບ່ອນກິດຈະການຂອງຕົນຕັ້ງຢູ່ ແລະ ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ.

## ໝວດທີ 5
## ການຄຸ້ມຄອງຟາມລ້ຽງສັດຂັ້ນທ້ອງຖິ່ນ

**ມາດຕາ 24 ອົງການຄຸ້ມຄອງຟາມລ້ຽງສັດຂັ້ນທ້ອງຖິ່ນ.**

ອົງການຄຸ້ມຄອງຟາມລ້ຽງສັດຂັ້ນທ້ອງຖິ່ນ ປະກອບມີ 3 ຂັ້ນ ດັ່ງນີ້:

1. ຂັ້ນແຂວງ ແມ່ນຂະແໜງລ້ຽງສັດ ແລະ ການປະມົງ ເປັນເສນາທິການໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ;

2. ຂັ້ນເມືອງ ແມ່ນໜ່ວຍງານລ້ຽງສັດ ແລະ ການປະມົງ ເປັນເສນາທິການໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;

3. ຂັ້ນບ້ານ ແມ່ນສັດຕະວະແພດບ້ານ ເປັນເສນາທິການ ໃຫ້ແກ່ອຳນາດການປົກຄອງບ້ານ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ ກ່ຽວກັບວຽກງານການຄຸ້ມຄອງຟາມລ້ຽງສັດ**

ໃນການຄຸ້ມຄອງຟາມລ້ຽງສັດ ຂະແໜງລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຂອງຕົນໃນການຈັດຕັ້ງປະຕິບັດແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຫຼື ກຳນົດໝາຍເຕັກນິກຂອງຂັ້ນເທິງໃນຂອບເຂດຄວາມຮັບຜິດຊອບຂອງຕົນ,

2. ຄົ້ນຄວ້າສະເໜີພະແນກກະສິກຳ ແລະປ່າໄມ້ແຂວງ ໃນການອອກ ແລະ ຢັ້ງຢືນເຕັກນິກຟາມລ້ຽງສັດຂະໜາດກາງ, ພ້ອມທັງປະກອບຄຳເຫັນຕໍ່ການຂໍອະນຸຍາດດຳເນີນທຸລະກິດກ່ຽວ ກັບຟາມລ້ຽງສັດຂະໜາດກາງທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ,

3. ພິຈາລະນາ ແລະ ອະນຸຍາດສ້າງຕັ້ງຟາມລ້ຽງສັດຂະໜາດໃຫຍ່ທີ່ເປັນການລົງທຶນພາຍໃນ ແລະ ຟາມລ້ຽງສັດຂະໜາດກາງ ບົນພື້ນຖານຂອງການລົງກວດກາຕົວຈິງ ຂອງພະນັກງານຂະແໜງລ້ຽງສັດ ແລະ ສັດຕະວະແພດ ແລະ ຕາມການສະເໜີຂອງຂະແໜງລ້ຽງສັດ ແລະ ການປະມົງ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ ທີ່ຟາມລ້ຽງສັດນັ້ນຕັ້ງຢູ່;

4. ໂຄສະນາເຜີຍແຜ່ມາດຕະຖານເຕັກນິກຟາມລ້ຽງສັດ ແລະ ລະບຽບການກ່ຽວຂ້ອງ ໃຫ້ຜູ້ປະກອບການ ແລະ ສາທາລະນະຊົນໄດ້ຮັບຊາບຢ່າງກວ້າງຂວາງ ເພື່ອໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິ ພາບ;

5. ສະເໜີພະແນກກະສິກຳ ແລະ ປ່າໄມ້ ແຂວງ ເພື່ອອອກຄຳສັ່ງໂຈະ, ຍົກເລີກ ຫຼື ຖອນໃບອະນຸ ຍາດເຕັກນິກຟາມລ້ຽງສັດຂະໜາດກາງ ແລະ ໃຫຍ່ ພ້ອມທັງສະເໜີ ພາກສ່ວນກ່ຽວຂ້ອງໃນຂັ້ນຂອງຕົນ ເພື່ອຖອນໃບອະນຸຍາດດຳເນີນທຸລະກິດ ເມື່ອເຫັນວ່າຜູ້ປະກອບການຟາມລ້ຽງສັດ ໄດ້ມີການລະເມີດລະບຽບການມາດຕະຖານເຕັກນິກຢ່າງຮ້າຍແຮງທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ບໍລິໂພກ, ສິ່ງແວດລ້ອມ ແລະ ສັງຄົມ;

6. ລົງຕິດຕາມກວດກາສະພາບການດຳເນີນກິດຈະການຟາມລ້ຽງສັດ ພາຍໃນທ້ອງຖິ່ນຂອງຕົນ ພ້ອມທັງລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ ຮັບຊາບຢ່າງເປັນປົກກະຕິ;

7. ພົວພັນຮ່ວມມືກັບຕ່າງປະເທດກ່ຽວກັບການຄຸ້ມຄອງຟາມລ້ຽງສັດ ຕາມການມອບໝາຍ;

8. ປະຕິບັດສິດ ແລະໜ້າທີ່ອື່ນໆ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງໜ່ວຍງານລ້ຽງສັດ ແລະ ການປະມົງ ກ່ຽວກັບວຽກງານການຄຸ້ມຄອງຟາມລ້ຽງສັດ.**

ໃນການຄຸ້ມຄອງຟາມລ້ຽງສັດ ໜ່ວຍງານລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການຈັດຕັ້ງປະຕິບັດແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຫຼື ກຳນົດ ໝາຍເຕັກນິກຂອງຂັ້ນເທິງໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄົ້ນຄວ້າສະເໜີຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ໃນການອອກ ແລະ ຢັ້ງຢືນເຕັກນິກຟາມລ້ຽງສັດຂະໜາດນ້ອຍ, ພ້ອມທັງປະກອບຄຳເຫັນຕໍ່ການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບຟາມລ້ຽງສັດ ຂະໜາດນ້ອຍ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ໂຄສະນາເຜີຍແຜ່ມາດຕະຖານເຕັກນິກຟາມລ້ຽງສັດ ແລະ ລະບຽບການກ່ຽວຂ້ອງ ໃຫ້ຜູ້ປະກອບການ ແລະ ປະຊາຊົນໄດ້ຮັບຊາບຢ່າງກວ້າງຂວາງ ເພື່ອໃຫ້ໄດ້ຮັບການຈັດ ຕັ້ງປະຕິບັດຢ່າງມີປະສິດທິພາບ;

4. ສະເໜີຫ້ອງການກະສິກຳ ແລະປ່າໄມ້ເມືອງ, ເພື່ອອອກຄຳສັ່ງໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດເຕັກນິກຟາມລ້ຽງສັດຂະໜາດນ້ອຍ, ພ້ອມທັງສະເໜີພາກສ່ວນທີ່ກ່ຽວຂ້ອງ ເພື່ອຖອນໃບອະນຸຍາດດຳເນີນທຸລະກິດ ເມື່ອເຫັນວ່າຜູ້ປະກອບການຟາມລ້ຽງສັດ ໄດ້ມີການລະເມີດລະບຽບການມາດຕະຖານເຕັກນິກຢ່າງຮ້າຍແຮງທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ບໍລິໂພກ, ສິ່ງແວດລ້ອມ ແລະສັງຄົມ;

5. ຕິດຕາມກວດກາສະພາບການດຳເນີນກິດຈະການຟາມລ້ຽງສັດຂະໜາດນ້ອຍ ພາຍໃນເມືອງ ຂອງຕົນ ພ້ອມທັງລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ທີ່ຕົນຂຶ້ນກັບໄດ້ຮັບຊາບຢ່າງເປັນປົກກະຕິ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງສັດຕະວະແພດບ້ານໃນການຄຸ້ມຄອງຟາມລ້ຽງສັດ**

ໃນການຄຸ້ມຄອງຟາມລ້ຽງສັດ ສັດຕະວະແພດບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ການປົກຄອງບ້ານ ໃນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ກຳນົດໝາຍເຕັກນິກ ຂອງຂັ້ນເທິງໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຕິດຕາມ, ກວດກາ ສະຖານທີ່ທີ່ຈະສ້າງຕັ້ງຟາມລ້ຽງສັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ນຳສະເໜີອົງການປົກຄອງບ້ານ ເພື່ອສະເໜີຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການພິຈາລະນາອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການຟາມລ້ຽງສັດ;

4. ລາຍງານສະພາບການບໍລິຫານ, ຈັດການຟາມລ້ຽງສັດແຕ່ລະຂະໜາດ ທີ່ຕັ້ງຢູ່ໃນພື້ນທີ່ຄວາມຮັບຜິດຊອບຂອງຕົນ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 6
## ການກວດກາວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ

**ມາດຕາ 28 ອົງການກວດກາວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ.**

ອົງການກວດກາ ວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ຊຶ່ງປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງຟາມລ້ຽງສັດຂັ້ນທ້ອງຖິ່ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ, ແນວລາວສ້າງຊາດແຂວງ, ພະແນກການ ອ້ອມຂ້າງແຂວງ, ອົງການຈັດຕັ້ງມະຫາຊົນ, ອົງການທຽບເທົ່າຂັ້ນແຂວງ, ຂັ້ນເມືອງ ແລະ ອົງການປົກຄອງບ້ານ.

**ມາດຕາ 29 ເນື້ອໃນການກວດກາ**

ການກວດກາວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ການປະຕິບັດກົດໝາຍການສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມລ້ຽງສັດ;

2. ການປະຕິບັດໜ້າທີ່ຂອງພະນັກງານ - ລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ;

3. ການເຄື່ອນໄຫວວຽກງານ ແລະ ການດໍາເນີນທຸລະກິດກ່ຽວກັບການສ້າງຕັ້ງ ແລະ ຄຸ້ມຄອງກິດຈະການຟາມ ລ້ຽງສັດ;

4. ການສ້າງ ແລະ ປະຕິບັດແຜນການກ່ຽວກັບວຽກງານສ້າງຕັ້ງ ແລະ ການຄຸ້ມຄອງກິດຈະການຟາມ ລ້ຽງສັດ.

**ມາດຕາ 30 ຮູບການກວດກາ.**

ຮູບການກວດກາ ປະກອບດ້ວຍ 3 ຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ແມ່ນການກວດກາ ຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍາ ນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມ ຈໍາເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບສຸກເສີນ ແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ມີການແຈ້ງໃຫ້ເປົ້າໝາຍທີ່ ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 31 ຂໍ້ຫ້າມສໍາລັບຜູ້ປະກອບການ.**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ປ່ອຍສັດຊະຊາຍໃນເຂດຊຸມຊົນ ໂດຍສະເພາະຢູ່ພາຍໃນບ້ານ, ເທດສະບານເມືອງ, ເທດສະບານ ແຂວງ ແລະ ຕາມທາງຫຼວງ;

2. ນໍາໃຊ້ຢາສານເຄມີ ຫຼື ສານກະຕຸ້ນປະສົມໃນອາຫານສັດ, ຜະລິດຕະພັນສັດ ຫຼື ນໍາເຂົ້າຮ່າງກາຍສັດ ທີ່ມີຜົນກະທົບທາງລົບຕໍ່ສັດ, ຜູ້ບໍລິໂພກ ແລະ ສິ່ງແວດລ້ອມລ້ອມ ລວມທັງມີການກະທໍາໃດໜຶ່ງ ທີ່ພາໃຫ້ເກີດມີ ການລະບາດຂອງພະຍາດສັດ;

3. ສ້າງຕັ້ງ ແລະ ດໍາເນີນກິດຈະການຟາມລ້ຽງສັດ ໂດຍບໍ່ໄດ້ຮັບອະນຸຍາດ;

4. ນໍາເຂົ້າ, ສົ່ງອອກ, ຂົນສົ່ງ ຫຼື ຈໍາໜ່າຍຜະລິດຕະພັນສິນຄ້າກ່ຽວກັບສັດທີ່ຕິດ ຫຼື ປົນເປື້ອນເຊື້ອ ພະຍາດສັດທີ່ຈໍາເປັນຕ້ອງແຈ້ງ ແລະ ສັດຜ່ານດ່ານຊາຍແດນ ທີ່ບໍ່ໄດ້ກໍານົດໄວ້ໃນໃບອະນຸຍາດ;

5. ລັກລອບນຳເຂົ້າຜະລິດຕະພັນສັດ ທີ່ບໍ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຈາກສັດຕະວະແພດ ເປັນຕົ້ນ ຊີ້ນ, ເຄື່ອງໃນ ແລະ ຊິ້ນສ່ວນອື່ນທີ່ເສຍຄຸນ, ບໍ່ໄດ້ມາດຕະຖານ ຫຼື ປະສົມສານເຄມີຕ້ອງຫ້າມ;

6. ທໍລະມານສັດ ຫຼື ການກະທຳອື່ນ ມີລັກສະນະທາລຸນ ຫຼື ລະເມີດຕໍ່ການສະຫວັດດີການສັດ;

7. ຂ້າ, ຄືວ, ບໍລິໂພກ, ຈຳໜ່າຍສັດເຫງົາ, ເຈັບປ່ວຍ ຫຼື ຕາຍໂດຍບໍ່ຮູ້ສາເຫດ;

8. ຖິ້ມຊາກ ແລະ ຊິ້ນສ່ວນສັດຕະຕາຍຢ່າງຊະຊາຍ;

9. ຊຸກເຊື່ອງ, ປອມແປງ ຫຼື ທຳລາຍເອກກະສານ, ຕາປະທັບ, ເຄື່ອງໝາຍ, ຂໍ້ມູນ ຫຼື ຕິວຢ່າງກ່ຽວກັບ ສັດ, ຜະລິດຕະພັນສັດ ຫຼື ຊິ້ນສ່ວນຕິດພະຍາດສັດ;

10. ໃຫ້ສິນບົນພະນັກງານ-ລັດຖະກອນ;

11. ນາບຂູ່, ກີດໜ່ວງທ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ສັດ ຕະວະແພດ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 32 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງເພື່ອບັງຄັບ, ນາບຂູ່, ກີດໜ່ວງຖ່ວງດຶງເອກະສານ ຫຼື ຮຽກຮັບ ສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດລວມໝູ່ ແລະ ບຸກຄົນ;

2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ປອມແປງເອກະສານ ຫຼື ອອກເອກະສານບໍ່ຖືກຕ້ອງ;

4. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັນຍາບັນທີ່ກໍ່ ໃຫ້ ເກີດຄວາມເສຍຫາຍຕໍ່ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ຮຽກເອົາຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການທີ່ບໍ່ຖືກຕ້ອງຕາມລະບຽບການ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 33 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ,ປະຕິ ບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ.**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນໂດຍມີການ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 36 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ວັນລົງລາຍເຊັນປະກາດໃຊ້ເປັນຕົ້ນໄປ.

**ເຈົ້າແຂວງ**

**ເລັດ ໄຊຍະພອນ**